# ຍິນດີຕ້ອນຮັບສູ່ Breeze Spa

ບໍ່ວ່າທ່ານກຳລັງຫາການບຳບັດຮ່າງກາຍເພື່ອສຸຂະພາບ ຫຼື ນວດສະໝຸນໄພເພື່ອຜ່ອນຄ່າຍ ທີ່ນີ້ຈະກາຍເປັນບ່ອນທີ່ຕອບໂຈດທ່ານຢ່າງແທ້ຈິງ ເພາະເຮົາເຊື່ອວ່າ "ຄວາມສຸກ ແລະ ຄວາມຜ່ອນຄາຍ" ແມ່ນຈຸດເລີ່ມຕົ້ນຂອງການມີສຸຂະພາບທີ່ດີ ເຊິ່ງນີ້ກໍ່ຄືສິ່ງທີ່ເຮົາຢາກໃຫ້ທ່ານໄດ້ສຳຜັດ.

ຢູ່ທີ່ Breeze Spa ຂອງພວກເຮົາ ທຸກໆທຣີດເມັ້ນແມ່ນອອກແບບມາໃຫ້ເຂົ້າເຖິງງ່າຍແລະຕອບໂຈດຄວາມຕ້ອງການຂອງທ່ານທຸກຮູບແບບ ພຽງແຕ່ບອກພວກເຮົາເຖິງຮູບແບບຄວາມຕ້ອງການຂອງທ່ານ ແລ້ວທາງເຮົາຈະຈັດສັນທຣີດເມັ້ນດີໆເພື່ອສ້າງປະສົບການສະປາຂອງທ່ານໃຫ້ອອກມາພິເສດທີ່ສຸດ.

ນອກນັ້ນ, ພວກເຮົາຍັງມີຕົວເລືອກໃຫ້ທ່ານຫຼາກຫຼາຍເພື່ອໄດ້ສຳຜັດກັບຄວາມຜ່ອນຄາຍຢ່າງເຕັມທີ່. ຫາກທ່ານຍັງບໍ່ແນ່ໃຈກ່ຽວກັບລາຍລະອຽດທຣີດເມັ້ນຕ່າງໆ ທາງທີມຜູ້ຊ່ຽວຊານຂອງພວກເຮົາມີຄວາມຍິນດີໃຫ້ຄຳແນະນຳເພື່ອໃຫ້ທ່ານໄດ້ຮັບປະສົບການທີ່ດີທີ່ສຸດ.

ປ່ອຍໃຈເພື່ອສຳຜັດຄວາມຜ່ອນຄາຍໄປກັບພວກເຮົາ ທີ່ Breeze Spa!

ລາຍລະອຽດ

**ການເດີນທາງມາເຖິງ**
ເພື່ອໃຫ້ທ່ານໄດ້ເພີດເພີນໄປກັບປະສົບການສະປາຢ່າງເຕັມທີ່ ເຮົາຂໍແນະນຳໃຫ້ທ່ານມາຮອດກ່ອນເວລານັດໝາຍປະມານ 15-20 ນາທີ.

**ການໃຫ້ຄຳປຶກສາ**
ຝ່າຍຜູ້ຈັດການສະປາແລະພະນັກງານຕ້ອນຮັບຂອງເຮົາພ້ອມໃຫ້ຄວາມດູແລທ່ານດ້ວຍໃຈ ເພາະເຮົາຢາກໃຫ້ທ່ານຮູ້ສຶກດີແລະໝັ້ນໃຈທີ່ສຸດ ເພື່ອຕອບສະໜອງຕໍ່ຄວາມຕ້ອງການຂອງທ່ານໃຫ້ຫຼາຍທີ່ສຸດ. ນອກນີ້ ເຮົາຂໍແນະນຳໃຫ້ທ່ານຕື່ມແບບຟອມທີ່ໄດ້ກະກຽມໄວ້ ເຊິ່ງທ່ານສາມາດສະແດງຄຳຄິດຄຳເຫັນ ເພື່ອໃຫ້ເຮົານຳໄປປັບປຸງໃນຄັ້ງຕໍ່ໄປ.

**ຂໍ້ຄວນລະວັງ**
ກະລຸນາແຈ້ງພະນັກງານຕ້ອນຮັບຮັບຮູ້ຫາກທ່ານກຳລັງຢູ່ໃນໄລຍະຖືພາ ມີອາການບາດເຈັບ ມີພາວະຄວາມດັນເລືອດສູງ ຜູມແພ້ ຫຼືຫາກໍ່ເຂົ້າຮັບການໄສຍະກຳຄວາມງາມ.

**ຊັບສິນທີ່ມີຄ່າ**
ເຮົາຂໍແນະນຳໃຫ້ທ່ານເກັບເຄື່ອງປະດັບ ເງິນສົດ ໂທລະສັບມືຖື ຫຼືສິ່ງຂອງມີຄ່າອື່ນໆ ໄວ້ໃນຫ້ອງພັກ ຫຼື ສຳພາລະໃກ້ຕົວຂອງທ່ານເພື່ອຄວາມປອດໄພ.

**ເຄື່ອງນຸ່ງຂອງຖື**
ພວກເຮົາໄດ້ມີການກະກຽມເສື້ອຄຸມ ເກີບແຕະ ແລະເສື້ອໃນ ສຳລັບໃຊ້ຄັ້ງດຽວໄວ້ໃຫ້ທ່ານໃນຫ້ອງທຣີດເມັ້ນທຸກໆຄັ້ງ.

**ແຂກທີ່ເປັນເດັກນ້ອຍ**
ສຳລັບແຂກຜູ້ເຂົ້າໃຊ້ບໍລິການທີ່ມີອາຍຸຕ່ຳກວ່າ 16 ປີ ຈຳເປັນຕ້ອງມີຜູ້ປົກຄອງຕິດຕາມມານຳ ແລະຕ້ອງມີການລົງຊື່ໃນແບບຟອມອະນຸຍາດຈາກຜູ້ປົກຄອງ.

**ສ້າງບັນຍາກາດແຫ່ງຄວາມຜ່ອນຄາຍ**
ຂໍຄວາມຮ່ວມມືມາຍັງທຸກທ່ານໃຫ້ປິດສຽງ ຫຼື ປິດໂທລະສັບມືຖື ແລະ ແທັບເລັດລະວ່າງທີ່ເຂົ້າມາໃຊ້ບໍລິການ ພ້ອມທັງຫ້າມສູບຢາໃນພື້ນທີ່ຫ້ອງສະປາ.

**ການຍົກເລີກການຈອງ**
ທ່ານສາມາດຍົກເລີກການຈອງໄດ້ໂດຍບໍ່ມີຄ່າໃຊ້ຈ່າຍໃດໆ ກ່ອນເວລານັດໝາຍ 4 ຊົ່ວໂມງ ຫາກເກີນຫຼັງຈາກນັ້ນ ຈະມີຄ່າທຳນຽມການຍົກເລີກ 50% ຂອງຄ່າບໍລິການ ແລະຫາກແຈ້ງຍົກເລີກນ້ອຍກວ່າ 1 ຊົ່ວໂມງກ່ອນເວລານັດໝາຍ ຫຼືບໍ່ໄດ້ມາໃຊ້ບໍລິການ ທາງເຮົາຈະໄດ້ເອີ້ນເກັບເກັບຄ່າໃຊ້ຈ່າຍໃນຈຳນວນເຕັມ.

breeze spa

## ຊຸດແພັກເກັດ ທຣີດເມັ້ນ

**ທຣີດເມັ້ນ Vientiane Serenity** — 150 ນາທີ — 85 ໂດລາ

ທຣີດເມັ້ນຟື້ນສະພາບຮ່າງກາຍຈາກພາຍໃນສູ່ພາຍນອກ ທີ່ເລີ່ມຕົ້ນຈາກການຂັດຜິວດ້ວຍສະຄັບສານສະກັດຈາກດອກຈຳປາ ເພື່ອຊ່ວຍເສີມສ້າງເຊວຜິວໃໝ່ ແລະ ເຕີມຄວາມຊຸ່ມຊື່ນ ເຮັດໃຫ້ຜິວນຽນນຸ້ມເບິ່ງສົດໃສ ຕໍ່ດ້ວຍການນວດແຜນໄທແບບປະຍຸກ ຊ່ວຍຄາຍຄວາມຕຶງຄຽດ ແລະ ເຮັດໃຫ້ຮູ້ສຶກຜ່ອນຄາຍຢ່າງລໍ້າລຶກ ປິດທ້າຍດ້ວຍທຣີດເມັ້ນບຳລຸງຜິວໜ້າ Crystal Fresh Facial ທີ່ຈະຊ່ວຍຄືນຄວາມສົດໃໝ່ໃຫ້ແກ່ໃບໜ້າ ເຮັດໃຫ້ເປັ່ງປະກາຍມີສຸຂະພາບດີ.

**ທຣີດເມັ້ນ Mood Massage** — 60 ນາທີ — 35 ໂດລາ
90 ນາທີ — 45 ໂດລາ

ທຣີດເມັ້ນດັ່ງກ່າວອອກແບບມາເພື່ອໃຫ້ທ່ານໄດ້ເລືອກການນວດທີ່ຖືກໃຈໄດ້ງ່າຍຂຶ້ນ ເພາະເຮົາໄດ້ແບ່ງຍ່ອຍຕາມລາຍການດັ່ງລຸ່ມນີ້:

**Dreamy**

ດື່ມດ່ຳໄປກັບສຽງດົນຕີປະກອບທີ່ຜ່ອນຄາຍ ກິ່ນຫອມລະມຸນພາຍໃນຫ້ອງ ແລະສຳຜັດອັນນຸ້ມນວນຂອງການນວດທີ່ຊ່ວຍໃຫ້ທ່ານເຂົ້າສູ່ພາວະອັນສະຫງົບນິ້ງ ເໝາະສຳລັບທ່ານທີ່ເຮັດວຽກໜັກ, ອິດເມື່ອຍຈາກການເດີນທາງໄກ, ຫຼື ເມື່ອເວລາຕ້ອງການປ່ອຍຕົວໄປກັບຄວາມຜ່ອນຄາຍ.

**Serene**

ແບບຕົວລົງນອນແລະປ່ອຍກາຍໃຫ້ສະບາຍ ເພາະການນວດດັ່ງກ່າວໃຊ້ເຕັກນິກການກົດຝາມື ແລະ ການລູບເບົາໆຕາມຮ່າງກາຍ ເພື່ອຢືດກ້າມເນື້ອຄາຍຈຸດ ແລ ະກຳຈັດຄວາມອິດເມື່ອຍ ເຮັດໃຫ້ທ່ານຮູ້ສຶກເບົາສະບາຍຜ່ອນຄາຍຄວາມກັງວົນຕ່າງໆ.

**Rejuvenated**

ແມ່ນການນວດຂັບສານພິດອອກຈາກຮ່າງກາຍ ແລະ ການບຳບັດດ້ວຍນ້ຳມັນຫອມລະເຫີຍທີ່ຄັດສັນມາຢ່າງດີ ສາມາດຊ່ວຍກຳຈັດສານພິດທີ່ສະສົມຄຽມຕຶງຄຽດ ມົນລະພິດ ແລະການໃຊ້ຊີວິດໃນເມືອງທີ່ເລັ່ງດ່ວນ. ນອກນັ້ນຍັງຊ່ວຍໃຫ້ທ່ານ ຮູ້ສຶກສົດຊື່ນ ເປັ່ງປັ່ງ ແລະພ້ອມຮັບທຸກຄວາມທ້າທາຍໃນແຕ່ລະວັນ.

**Invigorated**

ແມ່ນການນວດສຳລັບທ່ານທີ່ຕ້ອງການປົດປ່ອຍຄວາມຕຶງຄຽດສະສົມມາຍາວນານ ດ້ວຍການນວດແບບກົດລຶກທີ່ຕົງຈຸດ ຊ່ວຍຄາຍກ້າມເນື້ອ ກະຕຸ້ນການໄຫຼວຽນຂອງສານເອນດໍຟິນ ແລະເຮັດໃຫ້ຮູ້ສຶກສົດຊື່ນ ເບົາຕົວເປັນພິເສດ.

**Energised**

ເປັນການນວດແຜນໄທແບບດັ້ງເດີມ ດ້ວຍເຕັກນິກທີ່ຊ່ວຍຄາຍປົກກ້າມເນື້ອ ກະຕຸ້ນພະລັງງານ ແລະເສີມສ້າງລະບົບໄຫຼວຽນເລືອດ ທີ່ຈະເຮັດໃຫ້ທ່ານຮູ້ສຶກຮຶກເຫີມ ມີຊີວິດຊີວາ ແລະພ້ອມເລີ່ມວັນໃໝ່ດ້ວຍພະລັງທີ່ເຕັມປ່ຽມກວ່າເກົ່າ.

breeze spa

## Siam Sabai (ນວດແຜນໄທ)

"ສະບາຍ" ສະທ້ອນເຖິງວິຖີຊີວິດແບບໄທຍທີ່ເຕັມໄປດ້ວຍຄວາມຜ່ອນຄາຍ ແລະ ຄວາມສຸກ ດື່ມດໍ່າກັບຊ່ວງເວລາແຫ່ງຄວາມສະບາຍທີ່ປະສົມປະສານຄວາມມ່ວນຊື່ນແລະຄວາມຍິນດີ ຜ່ານທຣິດເມັ້ນທີ່ໄດ້ຮັບແຮງບັນດານໃຈຈາກຮາກວັດທະນະທໍາໄທ.

### ທຣິດເມັ້ນ Signature Muay Thai Massage

| | |
|---|---|
| 60 ນາທີ | 35 ໂດຣາ |
| 120 ນາທີ | 60 ໂດຣາ |

ເປັນການນວດຜະສານຈັງຫວະກົດຈຸດແຜນໄທ ກັບສາດທຣິດເມັ້ນແບບດັ້ງເດີມ ເລີ່ມຕົ້ນດ້ວຍແຮງກົດທີ່ເປັນຈັງຫວະເພື່ອຊ່ວຍໃຫ້ຮູ້ສຶກຜ່ອນຄາຍ ຕາມດ້ວຍການໃຊ້ລູກປະຄົບສະໝຸນໄພໄທເພື່ອສົ່ງຜ່ານຄວາມຮ້ອນເຂົ້າສູ່ກ້າມເນື້ອຢ່າງລຶກຊຶ້ງ ປິດທ້າຍດ້ວຍການນວດນໍ້າມັນອຸ່ນເພື່ອຊ່ວຍຄາຍຄວາມຕຶງຄຽດແລະມອບຄວາມເບົາຕົວສູງສຸດ.

### ທຣິດເມັ້ນ Siamese Jade Stones Massage

90 ນາທີ — 50 ໂດຣາ

ການນວດດ້ວຍຫີນຢົກດ້ວຍຄວາມຮ້ອນທີ່ພໍດີ ນວດຄືງໄປຕາມຮ່າງກາຍຢ່າງນຸ້ມນວນ ເພື່ອສົ່ງຜ່ານຄວາມຮ້ອນ ເຂົ້າສູ່ກ້າມເນື້ອຢ່າງເຕັມທີ່ ຊ່ວຍກະຕຸ້ນການໄຫຼວຽນຂອງເລືອດ ບັນເທົາຄວາມຄຽດ ແລະພາທ່ານສູ່ພາວະຜ່ອນຄາຍຢ່າງແທ້ຈິງ.

### ທຣິດເມັ້ນ Siamese Foot Massage

| | |
|---|---|
| 30 ນາທີ | 20 ໂດຣາ |
| 60 ນາທີ | 35 ໂດຣາ |

ຫາກທ່ານຕ້ອງການຜ່ອນຄາຍບໍລິເວນຕີນແບບມາດຕະຖານ ພຽງເລືອກທຣິດເມັ້ນ 30 ນາທີ ແຕ່ຖ້າຕ້ອງການການນວດບໍລິເວນຕີນແບບກົດຈຸດສະທ້ອນ ແມ່ນໃຫ້ເລືອກທຣິດເມັ້ນ 60 ນາທີ ເພື່ອຄວາມສົມດູນແລະຄວາມສະບາຍ.

### ທຣິດເມັ້ນ Siamese Back Tension Relief

60 ນາທີ — 35 ໂດຣາ

ແມ່ນການນວດບໍລິເວນຫຼັງ ຄໍ ແລະບ່າໄຫຼ່ທີ່ມີຜູ້ຊ່ຽວຊານການນວດ ຮູ້ຈັກແຕ່ລະຈຸດຄາຍຄວາມຕຶງຄຽດໄດ້ເປັນຢ່າງດີ ດ້ວຍສໍາຜັດມືທີ່ອ່ອນໂຍນແຕ່ຊົງພະລັງ ເໝາະຢ່າງຍິ່ງສໍາລັບທີ່ທ່ານທີ່ເດີນທາງໄກເປັນໄລຍະເວລາຕໍ່ເນື່ອງ.

### ທຣິດເມັ້ນ Siamese Head Massage

60 ນາທີ — 35 ໂດຣາ

ໄດ້ຮັບແນງບັນດານໃຈຈາກເຕັກນິກບູຮສານຂອງອິນເດຍ ທຣິດເມັ້ນນີ້ເໝາະຢ່າງຍິ່ງສໍາລັບຜູ້ທີ່ມີອາການໄມເກຣນ ຫຼື ນອນຫຼັບຍາກ, ພ້ອມມອບຄວາມຜ່ອນຄາຍທີ່ລໍ້າລຶກຜ່າຍຈັງຫວະສໍາຜັດທີ່ນຸ້ມນວນແລະສະໝໍ່າສະເໝີ.

### ທຣິດເມັ້ນ Crystal Fresh Facial

30 ນາທີ — 25 ໂດຣາ

ຟື້ນຟູຜິວໜ້າດ້ວຍການທໍາຄວາມສະອາດລໍ້ລຶກ ປະສານກັບການບໍາບັດດ້ວຍຄຼີສຕົ້ນ ທີ່ຊ່ວຍຫຼຸດຜ່ອນຮອຍຫ່ຽວແລະກະຕຸ້ນການສ້າງຜິວໃໝ່ ໃຫ້ຜິວເບິ່ງເປັ່ງປະກາຍແລະສຸຂະພາບດີ.

ລາຄາທັງໝົດແມ່ນຄິດໄລ່ເປັນສະກຸນເງິນໂດຣາ (USD) ລວມມີຄ່າບໍລິການແລະພາສີແລ້ວ.

breeze spa

## Spa Therapy Journeys

ເຮົາຄັດສັນລາຍການສະປາຫຼາກຫຼາຍຮູບແບບມາໃຫ້ທ່ານ ເພື່ອໄດ້ສຳຜັດກັບປະສົບການທີ່ດີທີ່ສຸດຈາກ Breeze Spa ບໍ່ວ່າຈະເປັນທຣີດເມັ້ນ 2 ຊົ່ວໂມງ ຫຼື 3 ຊົ່ວໂມງ ສຳລັບການຜ່ອນຄາຍທີ່ເໜືອລະດັບ.

**ທຣີດເມັ້ນ Body Glow** — **120 ນາທີ** — **60 ໂດຣາ**

ສຳຜັດປະສົບການສະປາທີ່ດີທີ່ສຸດຈາກ Breeze Spa ດ້ວຍການປະຕິບັດແບບຄົບສູດເລີ່ມຕົ້ນດ້ວຍການຂັດຜິວທີ່ທ່ານເລືອກເອງໄດ້ເພື່ອກຳຈັດເຊວຜິວເກົ່າ ຕາມດ້ວຍການນວດ Signature Mood Massage ທີ່ຊ່ວຍກະຕຸ້ນການໄຫຼວຽນເລືອດ ສົ່ງມອບຄວາມສົດຊື່ນແລະເປັ່ງປັ່ງຈາກພາຍໃນສູ່ພາຍນອກ.

**ທຣີດເມັ້ນ Super Stress Relief** — **120 ນາທີ** — **60 ໂດຣາ**

ແມ່ນການນວດແຜນພິເສດຈາກ Breeze Spa ທີ່ຈະຊ່ວຍຜ່ອນຄາຍຄວາມຄຽດສະສົມແລະຄວາມເຂັ່ງຕຶງຂອງກ້າມເນື້ອຕັ້ງແຕ່ຫົວຮອດປາຍຕີນ ເລີ່ມຕົ້ນດ້ວຍການນວດແບບລຶກລະອຽດ ຕາມດ້ວຍການນວດບໍລິເວນຫົວແລະຕີນ ເພື່ອຄືນສົມດູນແລະຄວາມຜ່ອນຄາຍສູງສຸດໃຫ້ກັບຮ່າງກາຍ.

**ທຣີດເມັ້ນ Essential Body Revival** — **180 ນາທີ** — **80 ໂດຣາ**

ທຣີດເມັ້ນຜ່ອນຄາຍຕະຫຼອດ 3 ຊົ່ວໂມງທີ່ໃຫ້ທ່ານໄດ້ເລືອກສຳຜັດກັບຄວາມສະບາຍໃນແບບທີ່ຕ້ອງການ ເລີ່ມຕົ້ນດ້ວຍການຂັດຜິວເພື່ອຟື້ນຟູແລະເຕີມຄວາມສົດຊື່ນ ຕາມດ້ວຍການນວດໃນຮູບແບບທີ່ທ່ານມັກ ແລະປິດທ້າຍດ້ວຍການນວດຕີນ ເພື່ອໃຫ້ຮູ້ສຶກຄາຍເສັ້ນ ສຸກໃຈຕະຫຼອດວັນ.

**ທຣີດເມັ້ນ Head Over Heels** — **180 ນາທີ** — **80 ໂດຣາ**

ໃຫ້ເຮົາໄດ້ດູແລທ່ານຕັ້ງແຕ່ບໍລິເວນຫົວຈົນຮອດປາຍຕີນ ເລີ່ມຕົ້ນດ້ວຍການແຊ່ຕີນເພື່ອປັບສົມດູນ ຕາມດ້ວຍທຣີດເມັ້ນບຳລຸງຮ່າງກາຍໃນແບບທີ່ທ່ານເລືອກໄດ້ ຕໍ່ດ້ວຍ Signature Mood Massage ເພື່ອຄາຍຄວາມຕຶງຄຽດ ແລະປິດທ້າຍດ້ວຍທຣີດເມັ້ນບຳລຸງຜິວໜ້າ ໃຫ້ຜິວໜ້າກັບມາສົດໃສແລະເປັ່ງປັ່ງອີກຄັ້ງ.

* ມີຄ່າໃຊ້ຈ່າຍເພີ່ມເຕີມສຳລັບທຣີດເມັ້ນບຳລຸງຜິວໜ້າ Brightening ແລະ Anti-Ageing

breeze spa

# ທຣີດເມັ້ນບຳລຸງຜິວໜ້າ

## ທຣີດເມັ້ນບຳລຸງຜິວໜ້າຂອງພວກເຮົາໃຊ້ຜະລິດຕະພັນລະດັບໂລກ ທີ່ຈະຍົກລະດັບປະສົບການສະປາຂອງທ່ານໃຫ້ເປັນຊ່ວງເວລາແຫ່ງຄວາມຜ່ອນຄາຍ.

**ທຣີດເມັ້ນ Hydration Facial Treatment** — **60 ນາທີ** — **40 ໂດຣາ**

ຟື້ນຟູຄວາມຊຸ່ມຊື່ນໃຫ້ກັບຜິວແຫ້ງຫຍາບແລະອ່ອນລ້າດ້ວຍທຣີດເມັ້ນເຕີມນ້ຳໃຫ້ຜິວຢ່າງລ້ຳລຶກ ດ້ວຍມາກສ໌ຄຸນນະພາບສູງທີ່ອຸດົມໄປດ້ວຍວິຕາມິນແລະເຕັກໂນໂລຊີຂັ້ນສູງ ທີ່ຕໍ່ຕ້ານຮອຍດ່າງ ແລະ ຮອຍຫ່ຽວ ເພີ່ມຄວາມຊຸ່ມຊື່ນເປັນສອງເທົ່າ ຟື້ນຟູໂຄງສ້າງຜິວຕາມທຳມະຊາດ ແລະ ຄືນຄວາມກະຈ່າງໃສເຍົາໄວ ໃຫ້ຜິວຮູ້ສຶກກະຊັບ ຍືດຢຸ່ນ ແລະສົດຊື່ນໃນທັນທີ ພ້ອມຍັງເສີມສ້າງຄວາມແຂງແຮງໃຫ້ແກ່ຜິວໜ້າ.

**ທຣີດເມັ້ນ Sensitive and After Sun Treatment** — **60 ນາທີ** — **40 ໂດຣາ**

ບໍ່ວ່າຜິວຂອງທ່ານຈະແດງຈາກແສງແດດ ລົມ ສະພາບອາກາດທີ່ຜັກປ່ຽນ ຫຼືຄວາມເຄັ່ງຄຽດ, ທຣີດເມັ້ນດັ່ງກ່າວຈະຊ່ວຍບັນເທົາແລະຟື້ນຟູຜິວທີ່ບອບບາງແລະລະຄາຍເຄືອງໄດ້ຢ່າງວ່ອງໄວ ດ້ວຍການມາກສ໌ສອງຂັ້ນຕອນທີ່ມອບຄວາມເຢັນແລະຄວາມຊຸ່ມຊື່ນຢ່າງເຂັ້ມຂຸ້ນ ເໝາະສຳລັບຜູ້ທີ່ມີປັນຫາຜິວທັງແບບຊົ່ວຄາວແລະຊຳເຮື້ອ.

**ທຣີດເມັ້ນ Deep Cleansing Facial Treatment** — **60 ນາທີ** — **40 ໂດຣາ**

ທຣີດເມັ້ນທຳຄວາມສະອາດຢ່າງລ້ຳລຶກ ຊ່ວຍກຳຈັດສິ່ງອຸດຕັນໃນຮູຂຸມຂົນແລະປັບຜິວໃຫ້ລຽບນຽນ ພ້ອມຜັດເຊວຜິວທີ່ໝອງຄ້ຳແລະແຫ້ງຫຍາບ ເພື່ອປັບສົມດູນສີຜິວແລະເນື້ອໃຫ້ສະໝ່ຳສະເໝີ ນອກຈາກນີ້ ຍັງມີຂັ້ນຕອນ Radiance Peel ທີ່ຊ່ວຍເປີດຮູຂຸມຂົນ ກະຕຸ້ນຄວາມກະຈ່າງໃສແລະເຮັດໃຫ້ຜິວລຽບນຽນຍິ່ງຂຶ້ນ.

**ທຣີດເມັ້ນ Brightening Facial Treatment** — **75 ນາທີ** — **50 ໂດຣາ**

ເປັນທຣີດເມັ້ນທີ່ອອກແບບມາເພື່ອຊ່ວຍຫຼຸດເລືອນຈຸດດ່າງດຳ ສີຜິວທີ່ບໍ່ສະໝ່ຳສະເໝີ ຝ້າ ກະ ແລະຄືນຄວາມກະຈ່າງໃສໃຫ້ຜິວດ້ວຍສູດເຂັ້ມຂຸ້ນທີ່ຊ່ວຍເສີມປະສິດທິພາບການປັບຜິວໃຫ້ສະຫວ່າງຂຶ້ນສອງເທົ່າ ຊ່ວຍຟື້ນຟູຄວາມຍືດຢຸ່ນ ພ້ອມຫຼຸດຄວາມໝອງຄ້ຳໃຫ້ຜິວອອກມາອ່ອນເຍົາ ລຽບນຽນ ແລະກະຈ່າງໃສຫຼາຍຂຶ້ນ.

**ທຣີດເມັ້ນ Anti-Ageing Facial Treatment** — **75 ນາທີ** — **50 ໂດຣາ**

ທຣີດເມັ້ນດັ່ງກ່າວອອກແບບມາເພື່ອຫຼຸດຮອຍດ່າງແລະຮອຍຫ່ຽວຍານຢ່າງມີປະສິດທິພາບ ດ້ວຍ Radiance Peel ສູດເຂັ້ມຂຸ້ນ ທີ່ຊ່ວຍກຳຈັດເຊວຜິວເກົ່າ ພ້ອມເຕີມຄວາມຊຸ່ມຊື່ນໃຫ້ແກ່ຜິວຢ່າງຍາວນານ ຜົນລັບທີ່ໄດ້ແມ່ນຜິວທີ່ລຽບນຽນ ກະຊັບ ແລະເບິ່ງອ່ອນໄວຂຶ້ນຢ່າງຊັດເຈນຕັ້ງແຕ່ຄັ້ງທຳອິດທີ່ເຮັດ.

breeze spa

## ທຣີດເມັ້ນດູແລຜິວກາຍ

ທຣີດເມັ້ນດູແລຜິວກາຍສູດພິເສດທີ່ລັງສັນດ້ວຍມົນສະເໜ່ສະເພາະຕົວຂອງ Breeze Spa ໃຫ້ທ່ານໄດ້ສຳຜັດກັບປະສົບການຜິວນຽນນຸ້ມ ກະຈ່າງໃສ ແລະເປັ່ງປະກາຍຄວາມມີຊີວິດຊີວາ!

**ທຣີດເມັ້ນ Frangipani Body Scrub** — **60 ນາທີ** — **30 ໂດຣາ**

ບຳລຸງຜິວຂອງທ່ານດ້ວຍສະຄຣັບດອກຈຳປາທີ່ເປັນຈຸດເດັ່ນຂອງພວກເຮົາ ຜະສົມຜະສານນໍ້າມັນຫອມລະເຫີຍແລະເຊຍບັດເຕີ້ເຂັ້ມຂຸ້ນ ຊ່ວຍຂັດເຊວຜິວທີ່ຫມອງຄ້ຳ ເສີມສ້າງຜິວທີ່ລຽບນຽນແລະອ່ອນໂຍນ ຊຸ່ມຊື່ນຢ່າງເລິກເຊິ່ງ ແລະເຕັມໄປດ້ວຍກິ່ນຫອມຂອງດອກໄມ້ ເຫມາະສຳລັບການຟື້ນຟູຄວາມສະຫວ່າງໃສໃຫ້ແກ່ຜິວຂອງທ່ານ.

**ທຣີດເມັ້ນ Jasmine & Mint Body Scrub** — **60 ນາທີ** — **30 ໂດຣາ**

ສຳຜັດສະເໜ່ທີ່ຜ່ອນຄາຍຂອງດອກມະລິ ແລະ ໃບມິ້ນຜ່ານການຂັດຜິວພິເສດ ເສີມປະສິດທິພາບດ້ວຍສານຕ້ານອະນຸມູນອິດສະລະ ແລະ ວິຕາມິນເອ ເພື່ອຊ່ວຍເຕີມຄວາມຊຸ່ມຊື່ນຕາມທຳມະຊາດໃຫ້ກັບຜິວ ພ້ອມຟື້ນຟູຄວາມອ່ອນເຢົາ ທຣີດເມັ້ນດັ່ງກ່າວ ຈະເຮັດໃຫ້ຜິວຂອງທ່ານລຽບນຽນ ແລະ ມີຊີວິດຊີວາ!

**ທຣີດເມັ້ນ Mango Sticky Rice Body Scrub** — **60 ນາທີ** — **30 ໂດຣາ**

ໄດ້ຮັບແຮງບັນດານໃຈຈາກເຂົ້າໜຽວໝາກມ່ວງ ເຂົ້າໜົມໄທຍອດນິຍົມ ທຣີດເມັ້ນນີ້ຈຶ່ງເປັນສະຄັບພິເສດອຸດົມດ້ວຍ ເນີຍໝາກມ່ວງສະກັດ, ນ້ຳມັນຫມາກພ້າວແລະເຂົ້າ ຊ່ວຍເສີມສ້າງຄວາມຊຸ່ມຊື່ນ ແລະບຳລຸງຜິວຂອງທ່ານດ້ວຍວິຕາມິນ ແລະແຮ່ທາດຫາຍາກ ເຮັດໃຫ້ຜິວລຽບນຽນ ແລະ ອ່ອນເຢົາມີສະເໜ່ພ້ອມກິ່ນຫອມຕະຫຼອດວັນ!

**ທຣີດເມັ້ນ Sun Soother Body Wrap** — **60 ນາທີ** — **30 ໂດຣາ**

ຖ້າຜິວໜັງຂອງທ່ານປະເຊີນກັບແສງແດດຫຼາຍເກີນໄປ ທຣີດເມັ້ນໃຊ້ການບຳບັດດ້ວຍຫວ້ານຫາງແຂ້ແລະຫມາກແຕງທີ່ຄືນຄວາມເຢັນສະບາຍໃຫ້ແຫ່ຜິວ. ແສງແດດສາມາດກຳຈັດຄວາມຊຸ່ມຊື່ນອອກຈາກຜິວຫນັງໄດ້ ແຕ່ສ່ວນປະສົມຈາກທຳມະຊາດເຫຼົ່ານີ້ຈະຊ່ວຍໃຫ້ຜິວຊຸ່ມຊື່ນ, ຟື້ນຟູແລະຫຼຸດຜ່ອນຮອຍແດງ, ເຮັດໃຫ້ຜິວຫນັງຂອງທ່ານຮູ້ສຶກສົດຊື່ນອີກຄັ້ງ!

## Water treatments

ການແຊ່ນໍ້າອາໂຣມ້າເປັນທາງເລືອກທີ່ດີສຳລັບການບັນເທົາຄວາມເຄັ່ງຄຽດ ຊ່ວຍເສີມສ້າງຄວາມຮູ້ສຶກໃນທາງບວກ ແລະຟື້ນຟູຄວາມສົມດູນຂອງຮ່າງກາຍຈາກພາຍໃນສູ່ພາຍນອກ.

**ທຣີດເມັ້ນ Yuzu Refreshing Bath** — **30 ນາທີ** — **20 ໂດຣາ**

ຜ່ອນຄາຍຈິດໃຈແລະເຕີມເຕັມຄວາມສົດຊື່ນຫຼັງວັນອັນຍາວນານດ້ວຍອາໂຣມ້າຈາກໝາກກ້ຽງຢູຊຸ ທີ່ອຸດົມໄປດ້ວຍສານຕ້ານອານຸມູນອິດສະຫຼະ ບຳລຸງຄວາມກະຈ່າງໃສ ແລະມອບຄວາມຮູ້ສຶກສົດຊື່ນແບບມີຊີວິດຊີວາ.

**ທຣີດເມັ້ນ Lavender Relaxing Bath** — **30 ນາທີ** — **20 ໂດຣາ**

ຜ່ອນຄາຍຄວາມຄຽດ ຄວາມອິດເມື່ອຍ ແລະຄວາມຕຶງຂອງກ້າມເນື້ອດ້ວຍອາໂຣມ້າບຳບັດຈາກລາເວນເດີ້ ຊ່ວຍເສີມພະລັງງານແລະຄວາມສະຫງົບພາຍໃນຈິດໃຈ.

ລາຄາທັງໝົດແມ່ນຄິດໄລ່ເປັນສະກຸນເງິນໂດຣາ (USD) ລວມມີຄ່າບໍລິການແລະພາສີແລ້ວ.